# ຂ້ອຍສາມາດໄປຮັບການເບິ່ງແຍງດູແລສຸຂະພາບໄດ້ຢູ່ໃສ?
## ເນັ້ນໜັກໃສ່ຄົນເຂົ້າເມືອງ

### ປະກັນໄພສຸຂະພາບ
ການມີບັດປະກັນໄພສຸຂະພາບເຮັດໃຫ້ທ່ານໄປຫາທ່ານໝໍ, ຜູ້ຊ່ຽວຊານ, ໂຮງໝໍໄດ້. ນອກນັ້ນທ່ານຍັງສາມາດໄດ້ຮັບຢາອີກ.

ຜູ້ອາໄສຢູ່ໃນເກາະຣອດ (Rhode Island) ທີ່ມີລາຍຮັບຕ່ຳຫຼາຍຄົນທີ່ບໍ່ໄດ້ເປັນພົນລະເມືອງອາດຈະມີສິດໄດ້ຮັບປະກັນໄພສຸຂະພາບບໍ່ເສຍຄ່າຜ່ານໂຄງການ Medicaid.

ຖ້າລາຍຮັບຂອງທ່ານເກີນຂີດຈຳກັດລາຍຮັບ Medicaid ຫຼື ທ່ານບໍ່ສາມາດລົງທະບຽນຢູ່ໃນ Medicaid ໄດ້ເນື່ອງຈາກສະຖານະຂອງທ່ານ, ທ່ານອາດຈະມີສິດຊື້ການຄຸ້ມຄອງລາຄາຕ່ຳຜ່ານ HealthSource RI (HSRI) ໄດ້.

ຕາຕະລາງນີ້ສະແດງໃຫ້ເຫັນສະພາບລວມທົ່ວໄປໃນການມີສິດໄດ້ຮັບ Medicaid ຂອງຄົນເຂົ້າເມືອງ ຫຼື ການຄຸ້ມຄອງຜ່ານ HSRI.

## ສະພາບລວມໃນການມີສິດໄດ້ຮັບປະກັນໄພສຸຂະພາບລາຄາບໍ່ແພງຂອງຄົນເຂົ້າເມືອງ
ຕ້ອງມີເງື່ອນໄຂຕາມລາຍຮັບ ແລະ ການມີສິດໄດ້ຮັບອື່ນ

| ໝວດຂອງການເຂົ້າເມືອງ | RIte Care/Medicaid | | | HealthSource RI<br>ຊື້ການຄຸ້ມຄອງ<br>ແລະ ສິນເຊື່ອພາສີຄ່າປະກັນໄພ |
|---|---|---|---|---|
| | ເດັກນ້ອຍຕ່ຳກວ່າ 19 ປີ | ແມ່ຍິງຖືພາ | ຜູ້ໃຫຍ່ໂສດ/ພໍ່ແມ່/ຄົນພິການ/ຜູ້ອາວຸໂສ | ເດັກນ້ອຍ, ພໍ່ແມ່, ແມ່ຍິງຖືພາ, ຜູ້ໃຫຍ່ໂສດ |
| ຜູ້ຢູ່ອາໄສຖາວອນຖືກຕ້ອງຕາມກົດໝາຍ ("ບັດຂຽວ") | ແມ່ນ | ແມ່ນ | • ຫຼັງຈາກ 5 ປີຢູ່ໃນສະຖານະ ຫຼື<br>• ເຂົ້າມາສະຫະລັດກ່ອນວັນທີ 22 ສິງຫາ 1996 ຫຼື<br>• ນັກຮົບເກົ່າ/ທະຫານປະຕິບັດໜ້າທີ່ຢູ່ ແລະ ຜົວ/ເມຍຂອງພວກເຂົາ ແລະ ລູກທີ່ຍັງບໍ່ແຕ່ງງານ | ແມ່ນ |
| ຜູ້ລີ້ໄພ; ຜູ້ຂໍລີ້ໄພ; ຜູ້ເຄາະຮ້າຍຂອງການຄ້າມະນຸດ; ຜູ້ເຄາະຮ້າຍຈາກຄວາມຮຸນແຮງຂອງຜົວ/ເມຍ, ຄົນໃນຄອບຄົວ ຫຼື ຄົນແປກໜ້າ; ອື່ນໆ | ແມ່ນ | ແມ່ນ | ແມ່ນ | ແມ່ນ |
| ບຸກຄົນທີ່ມີໜ້າຢູ່ຖືກຕ້ອງຕາມກົດໝາຍ* | ແມ່ນ | ແມ່ນ | ບໍ່ | ແມ່ນ |
| ບໍ່ໄດ້ເຮັດເອກະສານໄວ້ | ບໍ່ | ແມ່ນ | ບໍ່ | ບໍ່ |

*ບຸກຄົນທີ່ມີໜ້າຢູ່ຖືກຕ້ອງຕາມກົດໝາຍບໍ່ມີສະຖານະຖາວອນ, ແຕ່ໄດ້ຮັບອະນຸຍາດໃຫ້ເຂົ້າມາອາໄສຢູ່ໃນສະຫະລັດ. ບຸກຄົນເຫຼົ່ານີ້ລວມມີບຸກຄົນທີ່ມີສະຖານະໄດ້ຮັບການປົກປ້ອງຊົ່ວຄາວ (ຈາກແອລຊາວາດໍ, ເຮຕິ, ຮອນດູຣັສ, ນິກາຣາກົວ, ຊູດານ, ຊູດານໃຕ້ ແລະ ຊີເຣຍ) ແລະ ການອອກມາຕາມການບັງຄັບ (ໄລບີເຣຍ). ຜູ້ໄດ້ຮັບ DACA ບໍ່ລວມຢູ່ໃນໝວດນີ້.

ຂີດຈຳກັດລາຍຮັບສຳລັບ Medicaid ແຕກຕ່າງກັນສຳລັບປະຊາກອນຕ່າງໆ, ມີຕັ້ງແຕ່ເກີນສອງເທົ່າລະດັບຄວາມທຸກຍາກສຳລັບເດັກນ້ອຍ ແລະ ແມ່ຍິງຖືພາ; ພຽງແຕ່ເໜືອລະດັບຄວາມທຸກຍາກສຳລັບພໍ່ແມ່ ແລະ ຜູ້ໃຫຍ່ໂສດ; ແລະ ຢູ່ໃນລະດັບຄວາມທຸກຍາກສຳລັບຜູ້ອາວຸໂສ ແລະ ຄົນພິການ. ຂີດຈຳກັດລາຍຮັບເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອຈ່າຍຄ່າການຄຸ້ມຄອງຜ່ານ HSRI ແມ່ນສີ່ເທື່ອລະດັບຄວາມທຸກຍາກ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບລະດັບລາຍຮັບ, ໃຫ້ເຂົ້າເບິ່ງ: www.economicprogressri.org/immigrant-issues.

**ຖ້າບໍ່ແມ່ນທຸກຄົນຢູ່ໃນຄອບຄົວຂອງທ່ານເປັນພົນລະເມືອງ ຫຼື ຄົນເຂົ້າເມືອງມີສິດໄດ້ຮັບ**: ໃນບາງຄອບຄົວ, ເດັກນ້ອຍເປັນພົນລະເມືອງ ແລະ ພໍ່ແມ່ຂອງພວກເຂົາບໍ່ໄດ້ມີເອກະສານ ຫຼື ເວົ້າອີກຢ່າງໜຶ່ງບໍ່ມີສະຖານະມີສິດໄດ້ຮັບ. ຢູ່ໃນສະຖານະການນີ້, ພໍ່ແມ່ສາມາດສະໝັກຂໍໃຫ້ເດັກນ້ອຍ ແລະ ບໍ່ຈຳເປັນຕ້ອງໃຫ້ຂໍ້ມູນໃດໆກ່ຽວກັບຕົວພວກເຂົາເອງ (ຍົກເວັ້ນລາຍຮັບ). ຂໍ້ມູນທີ່ໃຫ້ຢູ່ໃນໃບສະໝັກຈະຖືກນຳໄປໃຊ້ພຽງແຕ່ເພື່ອເຮັດການຕັດສິນການມີສິດໄດ້ຮັບ ແລະ ຈະຖືກເກັບໄວ້ເປັນຄວາມລັບ.

**ວິທີສະໝັກຂໍ Medicaid ແລະ HSRI**: ທ່ານສາມາດພົບກັບຜູ້ໃຫ້ທິດທາງ (Navigator) ຢູ່ໃນຊຸມຊົນຂອງທ່ານ ຜູ້ທີ່ສາມາດຊ່ວຍທ່ານປະກອບໃບຄຳຮ້ອງທາງອອນລາຍໄດ້. ນອກນັ້ນຜູ້ໃຫ້ທິດທາງຍັງສາມາດຕອບຄຳຖາມທີ່ທ່ານອາດຈະຖາມໄດ້. ທ່ານສາມາດຊອກຫາຜູ້ໃຫ້ທິດທາງ (Navigator) ໄດ້ໂດຍການໂທຫາເບີ 2-1-1. ຜູ້ໃຫ້ທິດທາງ (Navigators) ຫຼາຍຄົນເວົ້າພາສາອື່ນນອກຈາກພາສາອັງກິດໄດ້.

ນອກນັ້ນທ່ານຍັງສາມາດສະໝັກຜ່ານສູນຕິດຕໍ່ HSRI ໄດ້, ວັນຈັນ – ວັນສຸກ, 8 ໂມງເຊົ້າ – 6 ໂມງແລງ ຢູ່ທີ່ 401 Wampanoag Trail, East Providence ຫຼື ສະໝັກຜ່ານທາງໂທລະສັບທີ່ເບີ: 1-855-840-4774. ໃຫ້ຂໍລ່າມແປພາສາໃຫ້ ຖ້າທ່ານຕ້ອງການ.

## ການເບິ່ງແຍງດູແລສຸຂະພາບຟຣີ ຫຼື ລາຄາຖືກ ຖ້າທ່ານບໍ່ມີປະກັນໄພ

ການມີທ່ານໝໍຄົນໜຶ່ງໄວ້ເພື່ອໃຫ້ທ່ານສາມາດໄປຮັບການກວດສຸຂະພາບປະຈຳປີ ຫຼື ໄປພົບທ່ານໝໍເມື່ອທ່ານບໍ່ສະບາຍມີຄວາມສຳຄັນຫຼາຍທີ່ຈະເຮັດໃຫ້ທ່ານມີສຸຂະພາບດີ.

ຖ້າທ່ານບໍ່ມີປະກັນໄພສຸຂະພາບ, ມີຫຼາຍບ່ອນທີ່ຈະໄປຮັບການເບິ່ງແຍງດູແລສຸຂະພາບໄດ້. ຜູ້ໃຫ້ບໍລິການເຫຼົ່ານີ້ຈະຊ່ວຍທ່ານໂດຍບໍ່ຄຳນຶງເຖິງສະຖານະການເຂົ້າເມືອງຂອງທ່ານ, ເຖິງແມ່ນວ່າພວກເຂົາອາດຈະຖາມກ່ຽວກັບສະຖານະຂອງທ່ານເພື່ອຊ່ວຍກຳນົດວ່າ ທ່ານອາດຈະມີສິດໄດ້ຮັບ Medicaid ບໍ່. ຜູ້ໃຫ້ບໍລິການຈະຮັກສາຂໍ້ມູນໄວ້ເປັນຄວາມລັບ. ຜູ້ໃຫ້ບໍລິການທັງໝົດມີພະນັກງານຜູ້ທີ່ສາມາດເວົ້າພາສາສະເປນ ແລະ ພາສາອື່ນໄດ້.

- **ສູນສຸຂະພາບຊຸມຊົນ:** ມີສູນສຸຂະພາບຊຸມຊົນຕັ້ງຢູ່ 29 ແຫ່ງໃນທົ່ວລັດທີ່ໃຫ້ການເບິ່ງແຍງດູແລສຸຂະພາບຮອບດ້ານແກ່ສະມາຊິກຂອງພວກເຂົາ. ຢູ່ບາງແຫ່ງອາດຈະມີການລໍຖ້າເປັນສະມາຊິກຂອງສູນສຸຂະພາບ ແລະ ຂຶ້ນກັບລາຍຮັບຂອງທ່ານ, ທ່ານອາດຈະຖືກບອກໃຫ້ຈ່າຍຄ່າທຳນຽມເລັກນ້ອຍໄດ້. ສະຖານະການເຂົ້າເມືອງແມ່ນບໍ່ເປັນບັນຫາ, ທຸກຄົນໄດ້ຮັບການຕ້ອນຮັບ.  ສຳລັບຂໍ້ມູນເພີ່ມເຕີມ ຫຼື ເພື່ອຊອກຫາສູນສຸຂະພາບຢູ່ໃກ້ທີ່ສຸດ, ໃຫ້ໂທເບີ: 401-274-1771. www.rihca.org
- **ຄລີນິກຟຣີຂອງເກາະຣອດ:** “ສູນບໍລິການທາງການແພດປະຕູດຽວ” ທີ່ໃຫ້ການບໍລິການທາງການແພດຮອບດ້ານຟຣີແກ່ຜູ້ໃຫຍ່. ໃຫ້ໂທຫາເພື່ອນັດໝາຍການມີສິດໄດ້ຮັບ: 401-274-6347 ຫຼື ໄປຄລີນິກຢູ່ທີ່ 655 Broad Street ຢູ່ໃນ Providence. ສະຖານະການເຂົ້າເມືອງແມ່ນບໍ່ເປັນບັນຫາ, ທຸກຄົນໄດ້ຮັບການຕ້ອນຮັບ. www.rifreeclinic.org
- **Clinica Esperanza-Hope Clinic:** ໃຫ້ການບໍລິການເບິ່ງແຍງດູແລຂັ້ນຕົ້ນແກ່ຜູ້ໃຫຍ່. ໂທຫາເບີ 401-347-9093 ຫຼື ໄປຄລີນິກຢູ່ທີ່ 60 Valley Street ຢູ່ໃນ Providence ເພື່ອນັດໝາຍ. ສະຖານະການເຂົ້າເມືອງແມ່ນບໍ່ເປັນບັນຫາ, ທຸກຄົນໄດ້ຮັບການຕ້ອນຮັບ. www.aplacetobehealthy.org/

## ຢາປິ່ນປົວຟຣີ ຫຼື ລາຄາຖືກ ຖ້າທ່ານບໍ່ມີປະກັນໄພ

ບັນດາບໍລິສັດທີ່ຜະລິດຢາປິ່ນປົວອາດຈະມີໂຄງການທີ່ຊ່ວຍຈ່າຍຄ່າຢາປິ່ນປົວທັງໝົດ ຫຼື ບາງຈຳນວນ. ທ່ານສາມາດຊອກຫາຂໍ້ມູນກ່ຽວກັບການຊ່ວຍເຫຼືອທີ່ມີໃຫ້ສຳລັບຢາປິ່ນປົວທີ່ທ່ານກິນ ແລະ ວິທີສະໝັກຂໍໄດ້ທີ່ “NeedyMeds” (www.needymeds.org).

## ການເບິ່ງແຍງດູແລຂອງໂຮງໝໍ ຖ້າທ່ານບໍ່ມີປະກັນໄພ

- **Medicaid:** ຖ້າທ່ານຈຳເປັນຕ້ອງໄດ້ມີການບໍລິການສຸກເສີນຢູ່ທີ່ໂຮງໝໍ ແລະ ທ່ານບໍ່ມີສິດລົງທະບຽນຢູ່ໃນ Medicaid ເຕັມໄດ້ເນື່ອງຈາກສະຖານະການເຂົ້າເມືອງຂອງທ່ານ, ທ່ານອາດຈະມີສິດໃຫ້ Medicaid ຈ່າຍຄ່າໃບບິນໂຮງໝໍໄດ້.  ໂຮງໝໍຈະຊ່ວຍທ່ານປະກອບໃບຄຳຮ້ອງສຳລັບການຄຸ້ມຄອງຂອງ Medicaid ທີ່ຈຳກັດນີ້.
- **ການເບິ່ງແຍງດູແລເພື່ອການກຸສົນ** ແຕ່ລະໂຮງໝໍຢູ່ໃນເກາະຣອດມີ “ໂຄງການເບິ່ງແຍງດູແລເພື່ອການກຸສົນ.” ໂຮງໝໍອາດຈະຈ່າຍຄ່າໃບບິນຂອງທ່ານທັງໝົດ ຫຼື ບາງສ່ວນ ຖ້າທ່ານບໍ່ສາມາດຈ່າຍໄດ້. ຂີດຈຳກັດລາຍຮັບແມ່ນ 200% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ (FPL), ດ້ວຍການພິຈາລະນາຂະໜາດຄອບຄົວ, ສຳລັບການຄຸ້ມຄອງເຕັມ ແລະ ເຖິງ 300% FPL ສຳລັບການຄຸ້ມຄອງບາງສ່ວນ. ນອກນັ້ນບາງໂຮງໝໍຍັງອາດຈະຖາມກ່ຽວກັບບັນຊີທະນາຄານ ແລະ ຊັບພະຍາກອນອື່ນ. ການຄຸ້ມຄອງນີ້ມີໃຫ້ໂດຍບໍ່ຄຳນຶງເຖິງສະຖານະການເຂົ້າເມືອງ.

  ໂຮງໝໍຕ້ອງຕິດປະກາດກົດລະບຽບການມີສິດໄດ້ຮັບການເບິ່ງແຍງດູແລເພື່ອການກຸສົນຂອງຕົນເອງ ແລະ ວິທີສະໝັກຂໍການຄຸ້ມຄອງ. ທ່ານສາມາດຂໍໃບຄຳຮ້ອງຈາກຫ້ອງການທຸລະກິດຂອງໂຮງໝໍໄດ້. ທ່ານສາມາດຍື່ນຄຳຮ້ອງທຸກກ່ຽວຂ້ອງກັບການເບິ່ງແຍງດູແລເພື່ອການກຸສົນໄດ້ໂດຍການໂທຫາສາຍດ່ວນຂໍ້ມູນສຸຂະພາບທີ່ເບີ 401-222-5960/RI Relay 711.

## ຖ້າທ່ານມີບັນຫາໃນການເອົາປະກັນໄພສຸຂະພາບ

ຖ້າທ່ານມີບັນຫາໃນການເອົາ ຫຼື ຮັກສາ Medicaid ຫຼື ການຄຸ້ມຄອງຈາກ HSRI ໄວ້, ທ່ານສາມາດໂທຫາໜຶ່ງໃນໜ່ວຍງານເຫຼົ່ານີ້ໄດ້. ທັງສອງແຫ່ງມີພະນັກງານຜູ້ທີ່ສາມາດເວົ້າພາສາສະເປນ ແລະ ຈະໃຫ້ຜູ້ແປພາສາສຳລັບພາສາອື່ນ.

- **RIREACH** ສຳລັບການຊ່ວຍເຫຼືອເລື່ອງ Medicaid, ການຄຸ້ມຄອງຂອງ HSRI ຫຼື ການເບິ່ງແຍງດູແລເພື່ອການກຸສົນຂອງໂຮງໝໍ: 401-270-0101.
- **ການບໍລິການກົດໝາຍຂອງເກາະຣອດ (RI LEGAL SERVICES)** ສຳລັບການຊ່ວຍເຫຼືອເລື່ອງ Medicaid. 401-274-2652

ກະກຽມໂດຍສະຖາບັນຄວາມກ້າວໜ້າທາງເສດຖະກິດ (Economic Progress Institute), economicprogressri.org **ແລະ**
**ພັນທະມິດຜູ້ເຂົ້າເມືອງເກາະຣອດ** (Rhode Island Immigrant Coalition), **ດ້ວຍການໃຫ້ທຶນຈາກກະຊວງສາທາລະນະສຸກເກາະຣອດ** (Rhode Island Department of Health) **ຜ່ານຜູ້ນຳການປະກົດຕົວຂຶ້ນຂອງມູນລະນິທິເກຣສເກ** (Kresge Foundation Emerging Leaders)
**ຢູ່ໃນໂຄງການລິເລີ່ມສາທາລະນະສຸກ**